**14. ນັກວິຊາຊີບທຸລະກິດຫຼັກຊັບ ແມ່ນຫຍັງ?**

ນັກວິຊາຊີບທຸລະກິດຫຼັກຊັບ ແມ່ນພະນັກງານຂອງບໍລິສັດຫຼັກຊັບ ແລະ ບໍລິສັດບໍລິຫານຊັບສິນ ທີ່ມີຄຸນວຸດທິການສຶກສາ, ປະສົບການ ແລະ ຜ່ານການກວດກາ ຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ) ວ່າມີເງື່ອນໄຂຄົບຖ້ວນໃນການເປັນນັກວິຊາຊີບທຸລະກິດຫຼັກຊັບ.

ນັກວິຊາຊີບທຸລະກິດຫຼັກຊັບ ປະກອບມີ 4 ປະເພດ ຄື:

- ນາຍໜ້າຊື້-ຂາຍຫຼັກຊັບ
- ທີ່ປຶກສາດ້ານການເງິນ
- ຜູ່ວິເຄາະຫຼັກຊັບ
- ຜູ່ບໍລິຫານກອງທຶນຮ່ວມ

ມາຮອດເດືອນ ມິຖຸນາ 2016 ມີນັກວິຊາຊີບທຸລະກິດຫຼັກຊັບ ທັງໝົດ 19 ຄົນ, ໃນນັ້ນ ປະກອບມີ ນາຍໜ້າຊື້-ຂາຍຫຼັກຊັບ 16 ຄົນ ແລະ ທີ່ປຶກສາດ້ານການເງິນ 3 ຄົນ.